ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 5799/ກງ

ນະຄອນຫຼວງວຽງຈັນ, ວັນທີ 18 ພະຈິກ ໒໐໒໑

# ຄຳແນະນຳ

## ກ່ຽວກັບການຄຸ້ມຄອງວຽກງານ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ

- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການຫັນວຽກງານພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດລວມສູນຕາມສາຍຕັ້ງ ຂຶ້ນໂດຍກົງກັບກະຊວງການເງິນ ສະບັບເລກທີ 35/ນຍ, ລົງວັນທີ 06 ກັນຍາ 2007;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງຄະນະປະຈຳພັກກະຊວງການເງິນ.

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດ ກ່ຽວກັບການຄຸ້ມຄອງວຽກງານ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ລວມສູນຕາມສາຍຕັ້ງ ຂຶ້ນໂດຍກົງກັບກະຊວງການເງິນ ຕາມກົດໝາຍ ແລະ ລະບຽບການ ໃນການແບ່ງຄວາມຮັບຜິດຊອບ, ການປະສານສົມທົບ ລະຫວ່າງ ກະຊວງການເງິນ ຮ່ວມກັບ ອົງການປົກຄອງທ້ອງຖິ່ນ ແຕ່ລະຂັ້ນ. ສະນັ້ນ, ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ຂອບເຂດທົ່ວປະເທດ.

## ລັດຖະມົນຕີກະຊວງການເງິນ ອອກຄຳແນະນຳ ດັ່ງນີ້:

### I. ຈຸດປະສົງ

ຄຳແນະນຳສະບັບນີ້ ກຳນົດຫຼັກການ, ເນື້ອໃນ, ຄວາມຮັບຜິດຊອບ, ຂອບເຂດການນຳໃຊ້, ເພື່ອໃຫ້ກຳແໜ້ນພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ຢູ່ແຕ່ລະຂັ້ນ ໃນການຄຸ້ມຄອງລວມສູນ ຕາມສາຍຕັ້ງ ນັບແຕ່ສູນກາງ ລົງຮອດທ້ອງຖິ່ນ ໃຫ້ມີຫຼັກການ ແລະ ຮັບປະກັນ ຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ ຂອບເຂດທົ່ວປະເທດ.

### II. ຂອບເຂດການນຳໃຊ້

ຄຳແນະນຳສະບັບນີ້ ນຳໃຊ້ສະເພາະ ການຄຸ້ມຄອງວຽກງານ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ຢູ່ແຕ່ລະຂັ້ນ ເພື່ອໃຫ້ຈັດຕັ້ງປະຕິບັດ ຢ່າງຖືກຕ້ອງ ແລະ ມີຄວາມເປັນເອກະພາບ ລວມສູນຕາມສາຍຕັ້ງ ໃນຂອບເຂດທົ່ວປະເທດ.

## III. ຄວາມຮັບຜິດຊອບຂອງກະຊວງການເງິນ

### 1. ດ້ານກົງຈັກການຈັດຕັ້ງ

1) ຄົ້ນຄວ້າ, ປັບປຸງ, ບູລະນະກົງຈັກການຈັດຕັ້ງຂອງ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ແຕ່ສູນກາງລົງຮອດທ້ອງຖິ່ນ;
2) ກຳນົດ ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ລະບອບແບບແຜນວິທີເຮັດວຽກ, ກົນໄກການປະສານສົມທົບລະຫວ່າງກະຊວງການເງິນ ຮ່ວມກັບ ອົງການປົກຄອງທ້ອງຖິ່ນ ແລະ ພາຍໃນຂະແໜງການເງິນດ້ວຍກັນ;
3) ສະເໜີ-ສ້າງຕັ້ງ, ປັບປຸງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ກົງຈັກການຈັດຕັ້ງຂອງ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ຕາມລະບຽບການ;
4) ກຳນົດມາດຕະຖານບາງຕຳແໜ່ງງານ ແລະ ຕຳແໜ່ງງານ ໃຫ້ກັບຜູ້ທີ່ດຳລົງຕຳແໜ່ງບໍລິຫານ, ຕຳແໜ່ງວິຊາການ ແລະ ລັດຖະກອນວິຊາການ ປະເພດຕ່າງໆຂອງ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ.

### 2. ດ້ານບຸກຄະລາກອນ

1) ຄຸ້ມຄອງ ຕິດຕາມ, ເກັບກຳສະຖິຕິຈຳນວນພົນ, ຊີວະປະຫວັດ ແລະ ການເຄື່ອນໄຫວຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ແລະ ບັນດາເມືອງ, ເທດສະບານ, ນະຄອນ ທີ່ຕິດພັນກັບຂະແໜງສາຍຕັ້ງ ໃນຂອບເຂດທົ່ວປະເທດ;
2) ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ປະເມີນແຜນກຳນົດ ໃນແຕ່ລະປີ, ຄວາມຕ້ອງການແຕ່ລະໄລຍະ; ປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນປະຈຳປີ(**ແບບປົກກະຕິ**) ແລະ ການປະເມີນສະເພາະ ກ່ອນການແຕ່ງຕັ້ງດຳລົງຕຳແໜ່ງໃໝ່ ຫຼື ກ່ອນການຍົກຍ້າຍໄປຮັບໜ້າທີ່ບ່ອນໃໝ່;
3) ຝຶກອົບຮົມ ແລະ ພັດທະນາ ພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ທາງດ້ານວິຊາສະເພາະ ຢູ່ພາຍໃນ ແລະ ຕ່າງປະເທດ;
4) ຄົ້ນຄວ້າ ການປະຕິບັດ ນະໂຍບາຍ, ເລື່ອນຊັ້ນ, ເລື່ອນຂັ້ນ, ອຸດໜູນບຳເນັດ, ບຳນານ ແລະ ອຸດໜູນອື່ນໆ ຕາມກົດໝາຍ ແລະ ລະບຽບການ;
5) ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ; ບັນຈຸ, ສັບປ່ຽນໜ້າທີ່ ແລະ ບ່ອນປະຈຳການຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ຕາມລະບຽບການ;
6) ການຍົກຍ້າຍພະນັກງານ-ລັດຖະກອນ ຈາກຂະແໜງການອື່ນ ມາສັງກັດຢູ່ ຂະແໜງສາຍຕັ້ງ (ພາສີ, ສ່ວຍສາອາກອນ ແລະ ຄັງເງິນ) ຫຼື ຂະແໜງສາຍຕັ້ງ ໄປສັງກັດຢູ່ ຂະແໜງການອື່ນ ຕ້ອງໄດ້ຮັບການເຫັນດີ ແລະ ຕົກລົງ ຈາກລັດຖະມົນຕີກະຊວງການເງິນ ຕາມລະບຽບການ;
7) ຕົກລົງ ຍ້ອງຍໍ ແລະ ປະຕິບັດນະໂຍບາຍ ຕໍ່ກົມກອງ ແລະ ພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ໃນກໍລະນີ ມີຜົນງານພົ້ນເດັ່ນ ໃນການປະຕິບັດວຽກງານ ຕາມກົດໝາຍ ແລະ ລະບຽບການ ຕາມການແບ່ງຂັ້ນຄຸ້ມຄອງ;

8) ຕົກລົງ ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະຄັງເງິນປະຈຳແຂວງ, ນະຄອນຫຼວງ ແລະ ບັນດາເມືອງ, ເທດສະບານ, ນະຄອນ ທີ່ຕິດພັນກັບຂະແໜງສາຍຕັ້ງ ໃນຂອບເຂດທົ່ວປະເທດ ຕາມກົດໝາຍ ແລະ ລະບຽບການ ໂດຍມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

9) ຫົວໜ້າກົມພາສີ, ກົມສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ **ແຕ່ງຕັ້ງຜູ້ຮັກສາການຊົ່ວຄາວ** ໃນບາງຕຳແໜ່ງບໍລິຫານດັ່ງນີ້:

- **ຕຳແໜ່ງບໍລິຫານປະເພດ 4 ປະກອບມີ:** ຫົວໜ້າພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ;
- **ຕຳແໜ່ງບໍລິຫານປະເພດ 5 ປະກອບມີ:** ຫົວໜ້າດ່ານພາສີສາກົນ;
- **ຕຳແໜ່ງບໍລິຫານປະເພດ 6 ຂອງພາສີ ປະກອບມີ:** ຫົວໜ້າຂະແໜງ, ຫົວໜ້າຫ້ອງການພາສີປະຈຳລະບົບສາງ, ທ່າບົກ ທ່ານາແລ້ງ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດອື່ນ;
- **ຕຳແໜ່ງບໍລິຫານປະເພດ 6 ຂອງສ່ວຍສາອາກອນ ແລະ ຄັງເງິນ ປະກອບມີ:** ຫົວໜ້າຂະແໜງ ຂອງສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ; ຫົວໜ້າສ່ວຍສາອາກອນ ແລະ ຄັງເງິນປະຈຳເມືອງ, ເທດສະບານ, ນະຄອນ; ຫົວໜ້າໜ່ວຍງານ ສ່ວຍສາອາກອນ ແລະ ຄັງເງິນປະຈຳເມືອງ.

3. ດ້ານວິຊາສະເພາະ-ວິຊາການ

1) ຄົ້ນຄວ້າ, ສ້າງ, ປັບປຸງນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ;

2) ໂຄສະນາ, ເຜີຍແຜ່ ແລະ ຈັດຕັ້ງຜັນຂະຫຍາຍກົດໝາຍ, ຄຳສັ່ງ ແລະ ນິຕິກຳອື່ນໆ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທົ່ວສັງຄົມ ເພື່ອຮັບຮູ້, ເຊື່ອມຊຶມ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;

3) ຄົ້ນຄວ້າດ້ານນະໂຍບາຍ, ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ທາງດ້ານວິຊາສະເພາະ-ວິຊາການໃນການຈັດຕັ້ງປະຕິບັດວຽກງານ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ຕາມກົດໝາຍ ແລະ ລະບຽບການ;

4) ຕິດຕາມ, ກວດກາ ແລະ ຊີ້ນຳ ການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ວຽກງານວິຊາສະເພາະຂອງ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;

5) ຄຸ້ມຄອງ, ພັດທະນາ ວຽກງານ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ເປັນທັນສະໄໝ;

6) ຍົກລະດັບ, ຝຶກອົບຮົມ ແລະ ພັດທະນາ ຕຳລາການຮຽນ-ການສອນ ທີ່ຕິດພັນກັບວຽກງານ ວິຊາສະເພາະ ຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ເພື່ອຫັນໄປເປັນວິຊາຊີບເທື່ອລະກ້າວ;

4. ດ້ານງົບປະມານ

1) ລວມສູນດ້ານງົບປະມານ, ບັນຊີຄັງເງິນເດືອນ, ນະໂຍບາຍ, ບໍລິຫານ, ດັດສົມສິ່ງເສີມ, ການລົງທຶນກໍ່ສ້າງພື້ນຖານໂຄ່ງລ່າງ ແລະ ອຸປະກອນຮັບໃຊ້ ໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະ;
2) ຄຸ້ມຄອງ, ນຳໃຊ້, ກວດກາ ການຈັດຕັ້ງປະຕິບັດຄັງບໍລິຫານວິຊາການ ຕາມລະບຽບການ.

5. ດ້ານການຄຸ້ມຄອງຊັບສິນ

ຄຸ້ມຄອງ, ປະກອບ, ນຳໃຊ້ ເຄຫາສະຖານ, ທີ່ດິນ, ພາຫະນະຮັບໃຊ້ບໍລິຫານ, ວັດຖຸ, ອຸປະກອນ ຮັບໃຊ້ວຽກງານວິຊາສະເພາະ ຕາມລະບຽບການ.

## IV. ການປະສານສົມທົບ ລະຫວ່າງ ກະຊວງການເງິນ ຮ່ວມກັບ ອົງການປົກຄອງທ້ອງຖິ່ນ

1. ສຶກສາອົບຮົມທາງດ້ານແນວຄິດ, ສະຕິຕໍ່ການຈັດຕັ້ງ, ລະບຽບວິໄນ, ສະຕິເຄົາລົບກົດໝາຍ, ລະບຽບການ, ຂໍ້ຫ້າມ ແລະ ວິໄນການເງິນ, ຈັນຍາບັນ ຮັບໃຊ້ຊາດ-ຮັບໃຊ້ປະຊາຊົນ ແລະ ອື່ນໆ ໃຫ້ເປັນປົກກະຕິ ແລະຕໍ່ເນື່ອງ;
2. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການຕ່າງໆ ພ້ອມທັງແນະນຳ ໃຫ້ພະນັກງານ-ລັດຖະກອນ ຂະແໜງການເງິນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທົ່ວສັງຄົມ ເພື່ອຮັບຮູ້, ເຊື່ອມຊຶມ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;
3. ສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ປະເມີນແຜນກຳນົດ ໃນແຕ່ລະປີ, ປະເມີນຜົນການປະຕິບັດວຽກງານປະຈຳປີ (**ແບບປົກກະຕິ**) ແລະ ປະເມີນຜົນສະເພາະ ກ່ອນການແຕ່ງຕັ້ງດຳລົງຕຳແໜ່ງໃໝ່ ຫຼື ກ່ອນການຍົກຍ້າຍໄປຮັບໜ້າທີ່ບ່ອນໃໝ່ ຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ຕາມລະບຽບການ;
4. ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ແລະ ບັນດາເມືອງ, ເທດສະບານ, ນະຄອນ ທີ່ຕິດພັນກັບຂະແໜງສາຍຕັ້ງ ໃນຂອບເຂດທົ່ວປະເທດ ມີຕຳແໜ່ງບໍລິຫານ ດັ່ງນີ້:

4.1 **ຕຳແໜ່ງບໍລິຫານປະເພດ 4 ປະກອບມີ:** ຫົວໜ້າພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ;

4.2 **ຕຳແໜ່ງບໍລິຫານປະເພດ 5 ປະກອບມີ:** ຮອງຫົວໜ້າພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ; ຫົວໜ້າດ່ານພາສີສາກົນ.

**ຕຳແໜ່ງບໍລິຫານປະເພດ 4 ແລະ 5** ແມ່ນປະສານສົມທົບກັນ ລະຫວ່າງ ກະຊວງການເງິນ ຮ່ວມກັບພະແນກການເງິນ, ຄະນະຈັດຕັ້ງແຂວງ, ນະຄອນຫຼວງ ແລ້ວຈຶ່ງນຳສະເໜີຂໍຄຳເຫັນຈາກຄະນະນຳຂອງແຂວງ, ນະຄອນຫຼວງ ເອກະພາບກັນແລ້ວ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ສະເໜີເຖິງລັດຖະມົນຕີກະຊວງການເງິນ ຢ່າງເປັນລາຍລັກອັກສອນ ເພື່ອພິຈາລະນາ ຕົກລົງ ຕາມລະບຽບການ.

4.3 **ຕໍາແໜ່ງບໍລິຫານປະເພດ 6 ປະກອບມີ:** ຮອງຫົວໜ້າດ່ານພາສີສາກົນ; ຫົວໜ້າຫ້ອງການພາສີປະຈໍາລະບົບສາງ, ທ່າບົກ ທ່ານາແລ້ງ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດອື່ນ; ຫົວໜ້າຂະແໜງ ຂອງພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈໍາແຂວງ, ນະຄອນຫຼວງ; ຫົວໜ້າສ່ວຍສາອາກອນ ແລະ ຄັງເງິນປະຈໍາເມືອງ, ເທດສະບານ, ນະຄອນ; ຫົວໜ້າໜ່ວຍງານ ສ່ວຍສາອາກອນ ແລະ ຄັງເງິນປະຈໍາເມືອງ;

4.4 **ຕໍາແໜ່ງບໍລິຫານປະເພດ 7 ຂອງສ່ວຍສາອາກອນ ແລະ ຄັງເງິນ ປະກອບມີ:** ຮອງຫົວໜ້າຂະແໜງ ຂອງສ່ວຍສາອາກອນ ແລະ ຄັງເງິນປະຈໍາແຂວງ, ນະຄອນຫຼວງ; ຮອງຫົວໜ້າສ່ວຍສາອາກອນ ແລະ ຄັງເງິນປະຈໍາເມືອງ, ເທດສະບານ, ນະຄອນ; ຮອງຫົວໜ້າໜ່ວຍງານ ສ່ວຍສາອາກອນ ແລະ ຄັງເງິນປະຈໍາເມືອງ.

ຕໍາແໜ່ງບໍລິຫານປະເພດ 6 ແລະ 7 ແມ່ນປະສານສົມທົບກັນ ລະຫວ່າງ ກະຊວງການເງິນ ຮ່ວມກັບຫົວໜ້າພະແນກການເງິນ, ພາສີ, ສ່ວຍສາອາກອນ ແລະ ຄັງເງິນ, ຄະນະຈັດຕັ້ງແຂວງ, ນະຄອນຫຼວງ, ອົງການປົກຄອງເມືອງ, ເທດສະບານ, ນະຄອນ **ເອກະພາບກັນແລ້ວ ໃຫ້ຫົວໜ້າພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈໍາແຂວງ, ນະຄອນຫຼວງ ສະເໜີເຖິງກົມພາສີ, ກົມສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ຄົ້ນຄວ້າພິຈາລະນາ (ໂດຍຜ່ານການຢັ້ງຢືນ ຢ່າງເປັນລາຍລັກອັກສອນ ຈາກພະແນກການເງິນ, ຄະນະຈັດຕັ້ງແຂວງ, ນະຄອນຫຼວງ) ແລ້ວລາຍງານເຖິງກົມຈັດຕັ້ງ ແລະ ພະນັກງານ ເພື່ອນໍາສະເໜີຕໍ່ລັດຖະມົນຕີກະຊວງການເງິນ ພິຈາລະນາ ຕົກລົງ ຕາມລະບຽບການ** ແລ້ວແຈ້ງໃຫ້ການນໍາຂອງແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ຮັບຊາບ ຢ່າງເປັນທາງການ.

4.5 **ຕໍາແໜ່ງບໍລິຫານປະເພດ 7 ຂອງພາສີ ປະກອບມີ:** ຮອງຫົວໜ້າພາສີປະຈໍາລະບົບສາງ, ເຂດເສດຖະກິດພິເສດ, ເຂດເສດຖະກິດອື່ນ, ທ່າບົກ ທ່ານາແລ້ງ; ຫົວໜ້າດ່ານພາສີທ້ອງຖິ່ນ, ຮອງຫົວໜ້າຂະແໜງ ຂອງພາສີປະຈໍາແຂວງ, ນະຄອນຫຼວງ;

4.6 **ຕໍາແໜ່ງບໍລິຫານປະເພດ 8 ຂອງພາສີ ປະກອບມີ:** ຮອງຫົວໜ້າດ່ານພາສີທ້ອງຖິ່ນ ແລະ ຫົວໜ້າດ່ານພາສີປະເພນີ;

**ຕໍາແໜ່ງບໍລິຫານປະເພດ 7 ແລະ 8 ຂອງພາສີ** ແມ່ນປະສານສົມທົບກັນ ລະຫວ່າງ ກະຊວງການເງິນ ຮ່ວມກັບ ຫົວໜ້າພະແນກການເງິນ, ພາສີ, ຄະນະຈັດຕັ້ງແຂວງ, ນະຄອນຫຼວງ **ເອກະພາບກັນແລ້ວ ໃຫ້ຫົວໜ້າພາສີປະຈໍາແຂວງ, ນະຄອນຫຼວງ ສະເໜີເຖິງຫົວໜ້າກົມພາສີ ພິຈາລະນາ** ລາຍງານເຖິງກົມຈັດຕັ້ງ ແລະ ພະນັກງານ ເພື່ອຄົ້ນຄວ້ານໍາສະເໜີຕໍ່ລັດຖະມົນຕີກະຊວງການເງິນ ພິຈາລະນາ ຢ່າງເປັນລາຍລັກອັກສອນ, **ພາຍຫຼັງທີ່ລັດຖະມົນຕີກະຊວງການເງິນ ເຫັນດີແລ້ວ ຈຶ່ງມອບໃຫ້ຫົວໜ້າກົມພາສີ ອອກຂໍ້ຕົກລົງຕາມລະບຽບການ** ແລ້ວແຈ້ງໃຫ້ການນໍາຂອງແຂວງ, ນະຄອນຫຼວງ ຮັບຊາບ ຢ່າງເປັນທາງການ.

5. ການຍົກຍ້າຍພະນັກງານ-ລັດຖະກອນວິຊາການຂອງ ກົມພາສີ ໄປສັງກັດຢູ່ ພາສີປະຈໍາແຂວງ, ນະຄອນຫຼວງ ຫຼື ຍົກຍ້າຍຈາກແຂວງ, ນະຄອນຫຼວງ ໄປສັງກັດຢູ່ ກົມພາສີ ແລະ ຍົກຍ້າຍຈາກແຂວງ, ນະຄອນຫຼວງ ໄປສັງກັດຢູ່ແຂວງອື່ນ **ການຈັດຕັ້ງລັດຖະການພາສີ ຕ້ອງໄດ້ສະເໜີເຖິງກົມພາສີ ພິຈາລະນາ** ແລະ ເກັບກໍາຂໍ້ມູນປະຫວັດການເຄື່ອນໄຫວ ແລະ ບັນຫາທີ່ຕິດພັນຕ່າງໆ, **ຫຼັງຈາກນັ້ນກົມພາສີ ຈຶ່ງຄົ້ນຄວ້າຕົກລົງ ຕາມລະບຽບການ** ແລະ ສໍາເນົາຂໍ້ຕົກລົງຍົກຍ້າຍສົ່ງໃຫ້ກົມຈັດຕັ້ງ ແລະ ພະນັກງານ, ອົງການປົກຄອງທ້ອງຖິ່ນ ເພື່ອຮັບຊາບ ຕາມລະບຽບການ;

6. ການຍົກຍ້າຍພະນັກງານ-ລັດຖະກອນ ວິຊາການ ພາຍໃນ ພາສີປະຈຳແຂວງ, ນະຄອນຫຼວງ, ດ່ານພາສີສາກົນ, ດ່ານພາສີທ້ອງຖິ່ນ, ດ່ານພາສີປະເພນີ, ພາສີປະຈຳລະບົບສາງ, ເຂດເສດຖະກິດພິເສດ, ເຂດເສດຖະກິດອື່ນ ແລະ ທ່າບົກ ທ່ານາແລ້ງ **ການຈັດຕັ້ງລັດຖະການພາສີ ຕ້ອງໄດ້ສະເໜີຂໍຄຳເຫັນ ຢ່າງເປັນລາຍລັກອັກສອນເຖິງກົມພາສີ ເພື່ອພິຈາລະນາ ແລ້ວອອກໜັງສືແຈ້ງຕອບ ມອບໃຫ້ຫົວໜ້າພາສີປະຈຳແຂວງ, ນະຄອນຫຼວງ ອອກຂໍ້ຕົກລົງຍົກຍ້າຍ ຕາມລະບຽບການ** ແລະ ສຳເນົາຂໍ້ຕົກລົງຍົກຍ້າຍສົ່ງໃຫ້ກົມຈັດຕັ້ງ ແລະ ພະນັກງານ, ກົມພາສີ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອຮັບຊາບ ຕາມລະບຽບການ;

7. ການຍົກຍ້າຍພະນັກງານ-ລັດຖະກອນ ວິຊາການ ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ໄປສັງກັດຢູ່ ແຂວງອື່ນ ຫຼື ຍົກຍ້າຍຈາກແຂວງ, ນະຄອນຫຼວງ ໄປສັງກັດຢູ່ ເມືອງ, ເທດສະບານ, ນະຄອນ ແລະ ຍົກຍ້າຍຈາກເມືອງ, ເທດສະບານ, ນະຄອນ ໄປສັງກັດຢູ່ ແຂວງ, ນະຄອນຫຼວງ **ການຈັດຕັ້ງຂອງສ່ວຍສາອາກອນ ແລະ ຄັງເງິນ ຕ້ອງໄດ້ສະເໜີເຖິງກົມສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ເພື່ອນຳສະເໜີເຖິງກົມຈັດຕັ້ງ ແລະ ພະນັກງານ ສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງ** ເກັບກຳຂໍ້ມູນປະຫວັດການເຄື່ອນໄຫວ ແລະ ບັນຫາທີ່ຕິດພັນຕ່າງໆ **ແລ້ວຈຶ່ງລາຍງານຕໍ່ຄະນະນຳກະຊວງການເງິນ ພິຈາລະນາ ຕົກລົງ** ຕາມລະບຽບການ;

8. ການຍົກຍ້າຍພະນັກງານ-ລັດຖະກອນ ວິຊາການ ສ່ວຍສາອາກອນ ແລະ ຄັງເງິນປະຈຳເມືອງ, ເທດສະບານ, ນະຄອນ ຈາກເມືອງໜຶ່ງ ໄປສັງກັດຢູ່ ເມືອງອື່ນ ພາຍໃນແຂວງ, ນະຄອນຫຼວງ ການຈັດຕັ້ງຂອງສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ **ຕ້ອງໄດ້ສະເໜີເຖິງກົມສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ຄົ້ນຄວ້າພິຈາລະນາ** ແລະ ເກັບກຳຂໍ້ມູນປະຫວັດການເຄື່ອນໄຫວ ແລະ ບັນຫາທີ່ຕິດພັນຕ່າງໆ, **ຫຼັງຈາກນັ້ນກົມສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ຈຶ່ງອອກຂໍ້ຕົກລົງຍົກຍ້າຍ ຕາມລະບຽບການ**, ແລະ ສຳເນົາຂໍ້ຕົກລົງຍົກຍ້າຍສົ່ງໃຫ້ກົມຈັດຕັ້ງ ແລະ ພະນັກງານ, ອົງການປົກຄອງທ້ອງຖິ່ນ ເພື່ອຮັບຊາບ ຕາມລະບຽບການ;

9. ການຍົກຍ້າຍ ຫຼື ແຕ່ງຕັ້ງ ພະນັກງານ-ລັດຖະກອນ ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ລົງຊ່ວຍວຽກຢູ່ຂັ້ນເມືອງ, ເທດສະບານ, ນະຄອນ ໃນໄລຍະສັ້ນ **(03 ເດືອນ, 06 ເດືອນ, 09 ເດືອນ ຫຼື 01 ປີ)** ເພື່ອແກ້ໄຂສະພາບການຂາດພະນັກງານ ຫຼື ລົງກໍ່ສ້າງຮາກຖານ ໄລຍະສັ້ນ ແມ່ນມອບໃຫ້ຫົວໜ້າສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ພິຈາລະນາ ຕົກລົງ ຕາມຄວາມເໝາະສົມ **ບົນພື້ນຖານການຄົ້ນຄວ້າເຫັນດີເປັນເອກະພາບ ລະຫວ່າງ ພະແນກການເງິນ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ** ແລ້ວລາຍງານໃຫ້ກົມສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ເພື່ອຮັບຊາບ ຕາມລະບຽບການ;

10. ການປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ແມ່ນມີການປະສານສົມທົບ ຕົກລົງເຫັນດີເປັນເອກະພາບ ຂັ້ນວິໄນ ລະຫວ່າງ ກະຊວງການເງິນ ຮ່ວມກັບ ອົງການປົກຄອງທ້ອງຖິ່ນ ແຕ່ລະຂັ້ນ, ຖ້າກໍລະນີ ເປັນສະມາຊິກພັກ ແມ່ນມອບໃຫ້ຄະນະພັກຂັ້ນນັ້ນ ເປັນຜູ້ຕົກລົງ ໂດຍມີການປຶກສາຫາລືເປັນເອກະພາບ ລະຫວ່າງ ວິໄນ ດ້ານພັກ ແລະ ດ້ານລັດ;

11. ໃນກໍລະນີ ເກີດມີສະພາບປະກົດການຫຍໍ້ທໍ້ ຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ຢູ່ບ່ອນໃດ **ຕ້ອງແມ່ນຄະນະພັກ-ຄະນະນຳຢູ່ບ່ອນນັ້ນ ເປັນເຈົ້າການຄົ້ນຄວ້າກ່ອນ**, ພາຍຫຼັງຕົກລົງເຫັນດີເປັນເອກະພາບ ໃນຮູບການລົງວິໄນແລ້ວ ຈຶ່ງສະເໜີຮູບການລົງວິໄນ ຕາມກົດໝາຍ ແລະ ລະບຽບການ ຕໍ່ຄະນະນຳຂອງແຂວງ, ນະຄອນຫຼວງ ແລະ ລັດຖະມົນຕີກະຊວງການເງິນ ພິຈາລະນາ ຕາມລະບຽບການ;

12. ພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ, ບັນດາເມືອງ, ເທດສະບານ, ນະຄອນ ທີ່ຕິດພັນກັບຂະແໜງສາຍຕັ້ງ ໄດ້ຖືກຢູ່ໃນໄລຍະດຳເນີນການສືບສວນ-ສອບສວນ, ເກັບກຳຂໍ້ມູນ, ກວດສອບຂໍ້ມູນຫຼັກຖານ ໃນການກະທຳຜິດ ແລະ ຖືກດຳເນີນການທາງຂະບວນການຍຸຕິທຳ, ການຈັດຕັ້ງທີ່ກ່ຽວຂ້ອງຂອງ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ຕ້ອງໄດ້ສະເໜີເຖິງກະຊວງການເງິນ (**ກົມຈັດຕັ້ງ ແລະ ພະນັກງານ**) ເພື່ອຄົ້ນຄວ້າສົມທົບກັບກົມພາສີ, ກົມສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ແລ້ວນຳສະເໜີຕໍ່ລັດຖະມົນຕີກະຊວງການເງິນ ພິຈາລະນາ ງົດການປະຕິບັດໜ້າທີ່ຊົ່ວຄາວ ແລະ **ຫັກເງິນເດືອນພື້ນຖານໄວ້ 50%** ຕາມກົດໝາຍ ແລະ ລະບຽບການ; **ຍົກເວັ້ນການກະທຳຜິດເຊິ່ງໜ້າ** ຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ທີ່ມີການລະເມີດຕໍ່ກົດໝາຍ, ລະບຽບການຕ່າງໆ ແລະ ຂໍ້ຫ້າມ ສ້າງຄວາມເສຍຫາຍໃຫ້ແກ່ລັດ ລວມໝູ່ ແລະ ຜູ້ປະກອບການ **ຈະຖືກງົດການປະຕິບັດໜ້າທີ່ຊົ່ວຄາວທັນທີ** ເພື່ອລາຍງານໃຫ້ການຈັດຕັ້ງ ດຳເນີນການກວດກາ ໂດຍມອບໃຫ້ການຈັດຕັ້ງຂອງຕົນ ທີ່ສັງກັດຢູ່ ຮັບຜິດຊອບ ໂດຍກົງ;

13. ພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ, ບັນດາເມືອງ, ເທດສະບານ, ນະຄອນ ທີ່ຕິດພັນກັບຂະແໜງສາຍຕັ້ງ ທີ່ຖືກງົດການປະຕິບັດໜ້າທີ່ຊົ່ວຄາວ, ພາຍຫຼັງທີ່ຄະນະກຳມະການວິໄນ ຫຼື ສານປະຊາຊົນ ຫາກຕົກລົງວ່າຜູ້ກ່ຽວ **ບໍ່ມີຄວາມຜິດ ຕາມການກ່າວຫາ** ກໍ່ຈະໄດ້ສືບຕໍ່ປະຕິບັດໜ້າທີ່ວຽກງານຂອງຕົນ ຕາມປົກກະຕິ ພ້ອມທັງຄິດໄລ່ເງິນ ເດືອນ, ເງິນນະໂຍບາຍອຸດໜູນ ແລະ ປີການຄືນໃຫ້ຜູ້ກ່ຽວ ຕາມລະບຽບການ;

14. ປະຕິບັດຄວາມຮັບຜິດຊອບອື່ນ ຕາມກົດໝາຍ ແລະ ລະບຽບການ.

## V. ຄວາມຮັບຜິດຊອບຂອງອົງການປົກຄອງທ້ອງຖິ່ນ ຕໍ່ກັບຂະແໜງສາຍຕັ້ງ (ພາສີ, ສ່ວຍສາອາກອນ ແລະ ຄັງເງິນ)

1. ຮັບຜິດຊອບໂດຍກົງຕໍ່ກັບວຽກງານ ປັບປຸງກໍ່ສ້າງພັກ, ຂະຫຍາຍພັກ, ອົງການຈັດຕັ້ງມະຫາຊົນ ແລະ ຍົກສູງບົດບາດການນຳພາຂອງບັນດາການຈັດຕັ້ງພັກ ແລະ ສະມາຊິກພັກຂອງ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ຕາມກົດລະບຽບຂອງພັກ;
2. ນຳພາ, ສຶກສາອົບຮົມການເມືອງ-ແນວຄິດ ຕໍ່ພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ປະຈຳຢູ່ທ້ອງຖິ່ນຂອງຕົນ ເພື່ອຍົກສູງຄວາມຮັບຜິດຊອບ ຕໍ່ໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ;
3. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການຕ່າງໆ ພ້ອມທັງແນະນຳ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນທ້ອງຖິ່ນ ເພື່ອຮັບຮູ້, ເຊື່ອຊຶມ ແລະ ເຂົ້າຮ່ວມ ໃນການຈັດຕັ້ງປະຕິບັດ;
4. ຕິດຕາມ, ກວດກາ, ການເຄື່ອນໄຫວຊີວິດການເມືອງ ຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ຕາມລະບຽບການ;
5. ຮັບຜິດຊອບວຽກບຳລຸງ, ຍົກລະດັບ ທາງດ້ານທິດສະດີການເມືອງ ແລະ ການປົກຄອງຕາມພາລະບົດບາດຂອງຕົນ;

6. ຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ, ສ້າງ ແລະ ປະຕິບັດແຜນງົບປະມານ ທາງດ້ານລາຍຮັບ ພາສີ, ສ່ວຍສາອາກອນ, ຄ່າທຳນຽມ ແລະ ລາຍຮັບຕ່າງໆ ທີ່ຈັດຕັ້ງປະຕິບັດ ພາຍໃນທ້ອງຖິ່ນ;
7. ຄົ້ນຄວ້າ ຄັດເລືອກ ຜົນງານ, ປະເມີນຜົນ ແລະ ຍ້ອງຍໍ ພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ແລະ ບັນດາເມືອງ, ເທດສະບານ, ນະຄອນ ທີ່ຕິດພັນກັບຂະແໜງສາຍຕັ້ງ ໃນຂອບເຂດທົ່ວປະເທດ;
8. ຊຸກຍູ້, ອຳນວຍຄວາມສະດວກ ແລະ ມີສ່ວນຮ່ວມ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ມີຜົນສຳເລັດ ຕາມການມອບໝາຍ;
9. ປະຕິບັດຄວາມຮັບຜິດຊອບອື່ນ ຕາມກົດໝາຍ ແລະ ລະບຽບການ.

## VI. ຄວາມຮັບຜິດຊອບ ຂອງພະແນກການເງິນແຂວງ, ນະຄອນຫຼວງ ຕໍ່ກັບ ຂະແໜງສາຍຕັ້ງ (ພາສີ, ສ່ວຍສາອາກອນ ແລະ ຄັງເງິນ)

1. ເປັນໃຈກາງໃນການປັບປຸງກໍ່ສ້າງພັກ, ຂະຫຍາຍພັກ, ອົງການຈັດຕັ້ງມະຫາຊົນ ແລະ ຍົກສູງບົດບາດການນຳພາຂອງການຈັດຕັ້ງພັກ ແລະ ສະມາຊິກພັກ ໃນຂົງເຂດການເງິນ ແລະ ຂະແໜງສາຍຕັ້ງ (ພາສີ, ສ່ວຍສາອາກອນ ແລະ ຄັງເງິນ) ຢູ່ຂັ້ນແຂວງ, ນະຄອນຫຼວງ;
2. ປະສານສົມທົບກັບຄະນະພັກ ແລະ ອົງການປົກຄອງທ້ອງຖິ່ນ ໃນວຽກງານພັກ-ພະນັກງານ, ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະນັກງານ-ລັດຖະກອນ ພະແນກການເງິນ, ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ໃນການຈັດຕັ້ງປະຕິບັດໜ້າທີ່ຄວາມຮັບຜິດຊອບ ໃຫ້ມີຄວາມເປັນເອກະພາບ ແລະ ກົມກຽວກັນ;
3. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການຕ່າງໆ ພ້ອມທັງແນະນຳ ໃຫ້ພະນັກງານ-ລັດຖະກອນຂະແໜງການເງິນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທົ່ວສັງຄົມ ເພື່ອຮັບຮູ້, ເຊື່ອມຊຶມ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;
4. ປະກອບຄຳເຫັນ ໃຫ້ກະຊວງການເງິນ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ຕາມລະບຽບການ;
5. ເປັນໃຈກາງ ປະສານສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງ ໃນກໍລະນີເກີດມີສະພາບປະກົດການຫຍໍ້ທໍ້ ຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ຢູ່ບ່ອນໃດ **ຕ້ອງແມ່ນຄະນະພັກ-ຄະນະນຳ ຢູ່ບ່ອນນັ້ນເປັນເຈົ້າການຄົ້ນຄວ້າກ່ອນ**, ພາຍຫຼັງຕົກລົງເຫັນດີເປັນເອກະພາບໃນຮູບການລົງວິໄນແລ້ວ ຈຶ່ງສະເໜີຮູບການລົງວິໄນ ຕາມກົດໝາຍ ແລະ ລະບຽບການ ຕໍ່ຄະນະນຳຂອງແຂວງ, ນະຄອນຫຼວງ ແລະ ລັດຖະມົນຕີກະຊວງການເງິນ ພິຈາລະນາ ຕາມລະບຽບການ;
6. ເປັນໃຈກາງ ໃນການປະສານສົມທົບກັບ ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ໃນການສ້າງແຜນ ແລະ ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ, ໄລຍະກາງ ແລະ ໄລຍະຍາວ;
7. ເປັນເສນາທິການ ໃນການຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ປະຈຳຢູ່ທ້ອງຖິ່ນ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

8. ອຳນວຍຄວາມສະດວກ ແລະ ມີສ່ວນຮ່ວມ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ມີຜົນສຳເລັດ ຕາມການມອບໝາຍ ເຊັ່ນ: ດ້ານສະຖານທີ່, ງົບປະມານ, ວັດຖຸ, ອຸປະກອນ, ພາຫະນະ ແລະ ອື່ນໆ;

9. ເປັນໃຈກາງ ສັງລວມ, ສະຫຼຸບລາຍງານການເຄື່ອນໄຫວຮອບດ້ານຂອງ ພະແນກການເງິນ, ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ໃຫ້ແກ່ອົງການປົກຄອງທ້ອງຖິ່ນ, ສະພາປະຊາຊົນຂັ້ນແຂວງ, ນະຄອນຫຼວງ ແລະ ກະຊວງການເງິນ ຕາມລະບຽບການ;

10. ເປັນໃຈກາງ ໃນການສະໜອງຂໍ້ມູນຂ່າວສານຂອງ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ຕາມລະບຽບການ;

11. ປະຕິບັດຄວາມຮັບຜິດຊອບອື່ນ ຕາມກົດໝາຍ ແລະ ລະບຽບການ.

## VII. ຄວາມຮັບຜິດຊອບ ຂອງຫ້ອງການການເງິນເມືອງ, ເທດສະບານ, ນະຄອນ ຕໍ່ກັບ ຂະແໜງສາຍຕັ້ງ (ພາສີ, ສ່ວຍສາອາກອນ ແລະ ຄັງເງິນ)

1. ເປັນໃຈກາງ ໃນການປັບປຸງກໍ່ສ້າງພັກ, ຂະຫຍາຍພັກ, ອົງການຈັດຕັ້ງມະຫາຊົນ ແລະ ຍົກສູງບົດບາດການນຳພາຂອງການຈັດຕັ້ງພັກ ແລະ ສະມາຊິກພັກ ໃນຂົງເຂດການເງິນເມືອງ, ເທດສະບານ, ນະຄອນ, ສ່ວຍສາອາກອນ ແລະ ຄັງເງິນ ຢູ່ຂັ້ນຂອງຕົນ;

2. ປະສານສົມທົບກັບຄະນະພັກ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ໃນວຽກງານພັກ-ພະນັກງານ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຫ້ອງການການເງິນ, ສ່ວຍສາອາກອນ ແລະ ຄັງເງິນປະຈຳເມືອງ, ເທດສະບານ, ນະຄອນ, ໜ່ວຍງານສ່ວຍສາອາກອນ ແລະ ຄັງເງິນ, ດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ຕາມລະບຽບການ;

3. ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ລະບຽບການຕ່າງໆ ພ້ອມທັງແນະນຳ ໃຫ້ພະນັກງານ-ລັດຖະກອນ ຫ້ອງການການເງິນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະຈຳເມືອງ, ເທດສະບານ, ນະຄອນ ເພື່ອຮັບຮູ້, ເຊື່ອມຊຶມ ແລະ ເຂົ້າຮ່ວມ ໃນການຈັດຕັ້ງປະຕິບັດ;

4. ປະກອບຄຳເຫັນ ໃຫ້ພະແນກການເງິນ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຫ້ອງການການເງິນ, ສ່ວຍສາອາກອນ ແລະ ຄັງເງິນປະຈຳເມືອງ, ເທດສະບານ, ນະຄອນ, ໜ່ວຍງານສ່ວຍສາອາກອນ ແລະ ຄັງເງິນ, ດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ;

5. ເປັນໃຈກາງ ປະສານສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງ ໃນກໍລະນີເກີດມີສະພາບປະກົດການຫຍໍ້ທໍ້ ຂອງພະນັກງານ-ລັດຖະກອນ ສ່ວຍສາອາກອນ ແລະ ຄັງເງິນປະຈຳເມືອງ, ເທດສະບານ, ນະຄອນ, ໜ່ວຍງານສ່ວຍສາອາກອນ ແລະ ຄັງເງິນ, ດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ຢູ່ບ່ອນໃດ **ຕ້ອງແມ່ນຄະນະພັກ-ຄະນະນຳ ຢູ່ບ່ອນນັ້ນ ເປັນເຈົ້າການຄົ້ນຄວ້າກ່ອນ**, ພາຍຫຼັງຕົກລົງເຫັນດີເປັນເອກະພາບໃນຮູບການລົງວິໄນແລ້ວ ຈຶ່ງສະເໜີຮູບການລົງວິໄນ ຕາມກົດໝາຍ ແລະ ລະບຽບການ ຕໍ່ຄະນະນຳຂອງເມືອງ, ເທດສະບານ, ນະຄອນ ແລ້ວຈຶ່ງສະເໜີເຖິງພະແນກການເງິນ, ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ຄົ້ນຄວ້າພິຈາລະນາຕາມລະບຽບການ;

6. ເປັນໃຈກາງ ໃນການປະສານສົມທົບກັບ ສ່ວຍສາອາກອນ ແລະ ຄັງເງິນປະຈຳເມືອງ, ເທດສະບານ, ນະຄອນ, ໜ່ວຍງານສ່ວຍສາອາກອນ ແລະ ຄັງເງິນ ໃນການສ້າງແຜນ ແລະ ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ, ໄລຍະກາງ ແລະ ໄລຍະຍາວ ຕາມລະບຽບການ;
7. ເປັນເສນາທິການ ໃນການຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງພະນັກງານ-ລັດຖະກອນ ພາສີ, ສ່ວຍສາອາກອນ ແລະ ຄັງເງິນ ປະຈຳຢູ່ທ້ອງຖິ່ນ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
8. ອຳນວຍຄວາມສະດວກ ດ້ານສະຖານທີ່, ງົບປະມານ, ວັດຖຸ, ອຸປະກອນ, ພາຫະນະຮັບໃຊ້ ໃຫ້ແກ່ສ່ວຍສາອາກອນ ແລະ ຄັງເງິນປະຈຳເມືອງ, ເທດສະບານ, ນະຄອນ, ໜ່ວຍງານສ່ວຍສາອາກອນ ແລະ ຄັງເງິນ;
9. ເປັນໃຈກາງ ສັງລວມ, ສະຫຼູບລາຍງານການເຄື່ອນໄຫວຮອບດ້ານຂອງ ຫ້ອງການການເງິນ, ສ່ວຍສາອາກອນ ແລະ ຄັງເງິນປະຈຳເມືອງ, ເທດສະບານ, ນະຄອນ, ໜ່ວຍງານສ່ວຍສາອາກອນ ແລະ ຄັງເງິນ, ດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ໃຫ້ແກ່ອົງການປົກຄອງທ້ອງຖິ່ນ ຢູ່ຂັ້ນຂອງຕົນ ແລະ ພະແນກການເງິນ, ພາສີ, ສ່ວຍສາອາກອນ ແລະ ຄັງເງິນປະຈຳແຂວງ, ນະຄອນຫຼວງ ຕາມລະບຽບການ;
10. ເປັນໃຈກາງ ໃນການສະໜອງຂໍ້ມູນຂ່າວສານຂອງ ສ່ວຍສາອາກອນ, ຄັງເງິນປະຈຳເມືອງ, ເທດສະບານ, ນະຄອນ, ໜ່ວຍງານສ່ວຍສາອາກອນ ແລະ ຄັງເງິນ, ດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ຕາມລະບຽບການ;
11. ປະຕິບັດຄວາມຮັບຜິດຊອບອື່ນ ຕາມກົດໝາຍ ແລະ ລະບຽບການ.

VIII. ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ສົມທົບກັບ ກົມພາສີ, ກົມສ່ວຍສາອາກອນ, ຄັງເງິນແຫ່ງຊາດ ແລະ ອົງການປົກຄອງທ້ອງຖິ່ນ ເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ;

IX. ຄຳແນະນຳສະບັບນີ້ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ ຕາມການແບ່ງຄວາມຮັບຜິດຊອບ, ກົນໄກການປະສານສົມທົບ ລະຫວ່າງ ກະຊວງການເງິນ ຮ່ວມກັບ ອົງການປົກຄອງທ້ອງຖິ່ນ ແຕ່ລະຂັ້ນ ໃຫ້ມີປະສິດທິພາບ, ປະສິດທິຜົນສູງ ແລະ ໄດ້ຮັບຜົນດີ, ສ່ວນພາກປະຕິບັດຕົວຈິງ ຫາກມີບັນຫາໃດ ທີ່ບໍ່ສອດຄ່ອງ ແລະ ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ແມ່ນຈະໄດ້ສືບຕໍ່ປັບປຸງ ແລະ ແກ້ໄຂ ໃນແຕ່ລະໄລຍະ ຕາມລະບຽບການ;

X. ຄຳແນະນຳສະບັບນີ້ ໃຊ້ປ່ຽນແທນ ຄຳແນະນຳ ສະບັບເລກທີ 4040/ກງ, ລົງວັນທີ 21 ພະຈິກ 2017 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງການເງິນ

ບຸນໃຈມ ອຸບົນປະເສີດ